ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ

ເລກທີ: 500/ອອປສ

ນະຄອນຫຼວງວຽງຈັນ, ວັນທີ 6/9/2011

# ຂໍ້ຕົກລົງ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ
## ວ່າດ້ວຍການຮັບຮອງ ແລະ ອະນຸມັດນຳໃຊ້ຮ່າງສະຖິຕິການກະທຳຜິດຂອງເດັກ

ອີງຕາມ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງໃໝ່ ປີ 2009.

ອີງຕາມ: ມະຕິຕົກລົງຂອງສະພາແຫ່ງຊາດ ກ່ຽວກັບການເລືອກຕັ້ງ ຫົວໜ້າອົງການໄອຍະການປະຊາ ປະຊາຊົນສູງສຸດ ສະບັບ ເລກທີ: 09/ສພຊ ລົງວັນທີ 16 / 06 / 2011

ອີງຕາມ: ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານກ່ຽວກັບ ການເກັບກຳສະຖິຕິການກະທຳຜິດຂອງເດັກໃນລະບົບອົງການໄອຍະການ.

ອີງຕາມ: ກອງປະຊຸມຄົ້ນຄວ້າຮ່າງສະຖິຕິ ການກະທຳຜິດຂອງເດັກໃນຄັ້ງ ວັນທີ 20-22/10/2010 ແລະວັນທີ 07/01/2011 ຂອງຄະນະປະສານງານວຽກງານຍຸຕິທຳສຳລັບເດັກຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ທ່າລາດ, ແຂວງວຽງຈັນ.

ອີງຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ; ຄະນະປະສານງານວຽກງານຍຸຕິທຳສຳລັບເດັກຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຂໍອະນຸມັດນຳໃຊ້ຮ່າງສະຖິຕິການກະທຳຜິດຂອງເດັກ ອົງການໄອຍະການປະຊາຊົນ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດຕົກລົງ.

ມາດຕາ 1: ຮັບຮອງ ແລະ ອະນຸມັດໃຫ້ນຳໃຊ້ຮ່າງສະຖິຕິການກະທຳຜິດຂອງເດັກຂອງ ອົງການໄອຍະການປະຊາຊົນເພື່ອເປັນຖານຂໍ້ມູນລາຍງານສາຍຕັ້ງຂອງຕົນເຊິ່ງຮ່າງສະຖິຕິປະກອບມີດັ່ງນີ້:

- ຮ່າງສະຖິຕິໃຊ້ສຳລັບເຂດເພື່ອລາຍງານແຂວງ.
- ຮ່າງສະຖິຕິໃຊ້ສຳລັບແຂວງເພື່ອລາຍງານອົງການໄອຍະການປະຊາຊົນສູງສຸດ.

- ຮ່າງສະຖິຕິໃຊ້ສຳລັບອົງການໄອຍະການພາກ ເພື່ອລາຍງານອົງການໄອຍະການປະຊາຊົນສູງສຸດ
- ຮ່າງສະຖິຕິໃຊ້ສຳລັບອົງການໄອຍະການປະຊາຊົນສູງສຸດ ເພື່ອເປັນຖານຂໍ້ມູນສັງລວມຂອບເຂດ ທົ່ວປະເທດ.

ມາດຕາ 2: ອົງການໄອຍະການປະຊາຊົນທຸກແຂວງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ ແລະ ຖືກຕ້ອງ.

ມາດຕາ 3: ມອບໃຫ້ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ; ຄະນະປະສານງານວຽກງານຍຸຕິທຳສຳລັບເດັກ ຂອງອົງການໄອຍະການປະຊາຊົນສູງສຸດ ອອກຄຳແນະນຳໃຫ້ ອົງການໄອຍະການປະຊາຊົນທຸກຂັ້ນໃນການຈັດຕັ້ງປະຕິບັດ ການນຳໃຊ້ຮ່າງສະຖິຕິການກະທຳຜິດຂອງເດັກໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ, ບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ໄຂສານ ສຸວົງ